ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ນາຍົກລັດຖະມົນຕີ

ເລກທີ...01......./ນຍ
ນະຄອນຫຼວງວຽງຈັນ, ວັນທີ:.13..1..2016

**ຖະແຫຼງການ**
**ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ຖະແຫຼງສະພາວະສຸກເສີນດ້ານສາທາລະນະສຸກລະດັບຊາດ ກ່ຽວກັບການລະບາດພະຍາດ ໂປລີໂອ ແລະ ແຜນການຈັດຕັ້ງປະຕິບັດຢອດຢາ ເພື່ອຕອບໂຕ້ຕໍ່ການ ລະບາດຂອງພະຍາດໂປລີໂອ**

- ອີງໃສ່ ຄໍາສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ: 63/ນຍ, ລົງວັນທີ: 13 ພະຈິກ 2015, ວ່າດ້ວຍການຕອບໂຕ້ຕໍ່ການລະບາດຂອງພະຍາດໂປລີໂອ ໂດຍການຍົກອັດຕາປົກຄຸມສັກຢາ/ຢອດຢາກັນພະຍາດ
- ອີງໃສ່ ໜັງສືສະເໜີຂອງກະຊວງສາທາລະນະສຸກ, ສະບັບເລກທີ: 1877/ສທ, ລົງວັນທີ: 30 ຕຸລາ 2015, ວ່າດ້ວຍການຕອບໂຕ້ຕໍ່ການລະບາດຂອງພະຍາດໂປລີໂອ ໂດຍການຍົກອັດຕາປົກຄຸມສັກຢາ/ຢອດຢາກັນພະຍາດ

ເພື່ອສະກັດກັ້ນການແຜ່ລາມຂອງການລະບາດພະຍາດ ໂປລີໂອ ແລະ ເຮັດໃຫ້ຂະບວນການຢອດຢາ ແລະ ສັກຢາກັນພະຍາດທີ່ຈະຈັດຂຶ້ນທັງໝົດ 3 ຮອບໃນທຸກບ້ານທົ່ວປະເທດໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ 100%

ອີງຕາມການຢັ້ງຢືນທາງດ້ານວິທະຍາສາດ ວ່າມີກໍລະນີພະຍາດລ່ອຍແຫຼວກະທັນຫັນຍ້ອນພະຍາດໂປລີໂອ 5 ກໍລະນີ, ໃນນັ້ນ 2 ກໍລະນີແມ່ນເສຍຊີວິດແລ້ວ, ຈາກສະພາບການດັ່ງກ່າວ ຂ້າພະເຈົ້າ ອອກຖະແຫຼງການ ກໍານົດໃຫ້ການລະບາດພະຍາດໂປລີໂອໃນເວລານີ້ ເປັນສະຖານະການສຸກເສີນດ້ານສາທາລະນະສຸກລະດັບຊາດ.

**ນາຍົກລັດຖະມົນຕີ ອອກຄໍາສັ່ງ**

1. ໃຫ້ທຸກຂະແໜງການ, ພາກສ່ວນລັດ ແລະ ເອກະຊົນ ລວມທັງປະຊາຊົນບັນດາເຜົ່າໃນທົ່ວປະເທດ ຈົ່ງສຸມທຸກກໍາລັງຈັດຕັ້ງປະຕິບັດວັນຢອດຢາກັນພະຍາດ ໂປລີໂອ ໃຫ້ສໍາເລັດຜົນ, ນອກຈາກນີ້ແລ້ວ ໃຫ້ສຸມທຸກກໍາລັງ ໂດຍອີງໃສ່ຄໍາສັ່ງແນະນໍາຂອງນາຍົກລັດຖະມົນຕີ, ສະບັບເລກທີ 63/ນຍ, ລົງວັນທີ 13/11/2015.
2. ໃຫ້ຈັດຕັ້ງປະຕິບັດຫຼັກການຕອບໂຕ້ຕາມລະບຽບການສາທາລະນະສຸກສາກົນ (IHR) ໃນການຕອບໂຕ້ຕໍ່ການລະບາດຂອງພະຍາດໂປລີໂອ ເຊິ່ງລະບຸໄວ້ໃນມາດຕາທີ 68.3, ທີ່ໄດ້ຕົກລົງຮັບຮອງເອົາໃນກອງປະຊຸມສາທາລະນະສຸກໂລກ (World Health Assembly) ເມື່ອເດືອນ ພຶດສະພາ ປີ 2015.
3. ຊຸກຍູ້ໃຫ້ປະຊາຊົນລາວທຸກຄົນ ຜູ້ທີ່ມີແຜນຈະເດີນທາງໄປຕ່າງປະເທດໃນລະຫວ່າງປີ 2016 ຄວນໄດ້ຮັບການຢອດວັກຊີນໂປລີໂອ ແລະ ມີໃບຢັ້ງຢືນຈາກແພດກ່ອນເດີນທາງອອກຕ່າງປະເທດ, ດີແທ້ແມ່ນກ່ອນເດີນທາງ 01 ເດືອນ.
4. ຊຸກຍູ້ໃຫ້ຊາວຕ່າງດ້າວທຸກຄົນທີ່ຈະເດີນທາງເຂົ້າມາເຮັດວຽກ ຫຼື ຈຸດປະສົງໃດກໍ່ຕາມ ໃນ ສປປ ລາວ ທີ່ຫຼາຍກວ່າ 01 ເດືອນຂຶ້ນໄປ ຄວນໄດ້ຮັບການຢອດຢາໂປລີໂອໃຫ້ຄົບກ່ອນເດີນທາງເຂົ້າມາ.
5. ຄໍາສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ສາມາດນໍາໃຊ້ຈົນກວ່າການລະບາດພະຍາດໂປລີໂອໄດ້ຢຸດຕິລົງ ຢ່າງໜ້ອຍ 06 ເດືອນ.

ນາຍົກລັດຖະມົນຕີ

ທອງສິງ ທໍາມະວົງ